# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 30 ກັນຍາ 2007 ( 09-30-2007 )

---

## <u>ການອ່ານລາຍມືທີ່ຂຽນຢູ່ຝາ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ດານີເອນ 5:1-6,22-28,30-31

**<u>ຄຳຖາມແຫ່ງຊີວິດ:</u>** ຂ້າພະເຈົ້າຈະເຮັດແບບເສີຍຊາຕໍ່ສິ່ງທີ່ເປັນສ່ວນຂອງພຣະເຈົ້າບໍ່

**<u>ຄວາມຈິງໃນພຣະຄັມພີ:</u>** ພຣະເຈົ້າສຳຫລວດ ແລະພິພາກສາມະນຸດຕາມການດຳເນີນຊີວິດຂອງພວກເຂົາ ພຣະອົງຊົ່ງຊາເບິ່ງກິຣິຍາ ແລະການກະທຳຕໍ່ຂອງຖວາຍ, ແລະພຣະອົງກໍພິພາກສາພວກເຂົາຕາມນັ້ນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ອຍໃຫ້ທ່ານດຳຣົງຊີວິດໃນອີກໂລກອື່ນຊຶ່ງບໍ່ເປັນຝ່າຍໂລກນີ້ໂດຍ:

- ການໂຕ້ຕອງເບິ່ງວ່າທ່ານກັບກາຍເຂົ້າກັບຝ່າຍໂລກນີ້ ແລະທ່ານໄດ້ຖວາຍກຽດແດ່ພຣະເຈົ້າດ້ວຍຊີວິດຂອງທ່ານບໍ່; ແລະ
- ການຕັດສິນໃຈວ່າຈະເຮັດແນວໃດຈຶ່ງຈະນຳພຣະກຽດ ແລະພຣະສງ່າຣາສີມາສູ່ພຣະເຈົ້າໄດ້.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>**ແຜນການສອນ**</u>", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>** - ສະແດງອອກເຖິງ " ການດຳຣົງຊີວິດໃນໂລກອື່ນຊຶ່ງບໍ່ແມ່ນໂລກນີ້ໃຫ້ເປັນທີ່ສົນໃຈໃນບົດຮຽນນີ້. ໃຫ້ນັກຮຽນຍົກເອົາເຣື່ອງນຶ່ງທີ່ສະແດງເຖິງຄວາມເຊື່ອຂອງຄຣິສຕຽນ ຫລືການປະຕິບັດຂອງຄວາມເຊື່ອໃນການນະມັສການ (ເຊັ່ນ ໄມ້ກາງແຂນ ຫລື ນົງກຸດໝານ) ມາສົນທະນາວ່າໃນທາງຂອງຄຣິສຕຽນນັ້ນ ເຄື່ອງໝາຍອັນໃດທີ່ເປັນການບໍ່ເຄົາຣົບພຣະເຈົ້າໃນສັງຄົມປະຈຸບັນ.

**ຄຳຖາມ:** 1. ທຸກມື້ນີ້ແມ່ນສິດອຳນາດປະເພດໃດທີ່ຄອບຄຸມ- ຄຣິສຕຽນ ແລະຄົນທີ່ບໍ່ແມ່ນຄຣິສຕຽນ?
2. ສິ່ງທີ່ຕໍ່ສູ້ກັບຄວາມເຊື່ອຂອງຄຣິສຕຽນນັ້ນແມ່ນຫຍັງ? ສິ່ງນີ້ໄດ້ເກີດຂຶ້ນກັບທ່ານຢູ່ບໍ່?

## 1. ຄວາມສັກສິດຝ່າຍໂລກ: ( ດານີເອນ 5:1-4)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ດານີເອນ 5:1-4
2) **ອະທິບາຍ:** ສິ່ງຂອງທາງຝ່າຍໂລກມີສ່ວນເຮັດໃຫ້ພວກເຮົາຫວັ່ນໄຫວອ່ອນແອຕໍ່ຄວາມພຍາຍາມຂອງພວກເຮົາ. ສິ່ງເຫລົ່ານີ້ສາມາດກົດດັນໃຫ້ພວກເຮົາເຮັດໃນສິ່ງທີ່ຜິດໄດ້, ສິ່ງຂອງໄດ້ເຮັດໃຫ້ບາງຄົນມີຄວາມປະທັບໃຈ ຫລືປາຖນາໃນສິ່ງທີ່ມີຣາຄາແພງທີ່ຕົນບໍ່ສາມາດຊື້ໄດ້ ແລະກໍພາໃຫ້ເກີດຄວາມຄິດຈະຂະໂມຍເອົາ ຫລືທຳການລ່ວງເກີນຍາດຊີງເອົາ. ກະສັດໄດ້ລ່ວງເກີນເອົາຂອງທີ່ມີຄ່າ ແລະສິ່ງສຳຄັນຂອງພຣະເຈົ້າທີ່ຢູ່ໃນພຣະວິຫານມາໃຊ້ໃນທາງທີ່ຜິດ.
3) **ຖາມວ່າ:** (1) ແມ່ນຫຍັງທີ່ມີສິດຄອບຄຸມຊີວິດຂອງກະສັດເບັນຊັດຊາເຣ?
(2) ພຣະຄັມພີໄດ້ເວົ້າຕໍ່ຕ້ານ (ບໍ່ເຫັນດີ) ກັບເຣື່ອງຂອງມຶນເມົາ ເປັນຕົ້ນແມ່ເຫລົ້າ ທ່ານມີຄວາມຄິດເຫັນຢ່າງໃດ?
(3) ເຫດຜົນທີ່ຫ້າມບໍ່ໃຫ້ດື່ມຂອງມຶນເມົານັ້ນແມ່ນຫຍັງ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ດານີເອນ 5:1-4
1. ເປັນຫຍັງກະສັດເປັນຜູ້ມີພະລັງອຳນາດສາມາດຈຶ່ງຈັດງານກິນລ້ຽງຢ່າງສິ້ນເປືອງຟຸ່ມເຟືອຍຮ່ວມກັບເຈົ້ານາຍພັນຄົນຂອງລາວໃນຄືນນັ້ນ?
2. ທ່ານຄິດວ່າການກະທຳຂອງເບັນຊັດຊາເຣເປັນການເປີດເຜີຍ ແລະເຮັດໃຫ້ຊື່ສຽງ ແລະຄວາມສຳຄັນຂອງວິຫານລົດນ້ອຍລົງຢູ່ບໍ່? ການກະທຳຢ່າງນີ້ເປັນການຫລົບລູ່ພຣະເຈົ້າບໍ່?
3. ທ່ານໄດ້ເຄີຍພິຈາຣະນາເຖິງຊີວິດຂອງທ່ານກ່ຽວກັບເຣື່ອງຢ່າງນີ້ບໍ່?

## 2. ຮອຍມືເທິງຝາ: ດານີເອນ 5:5-6

1) ຂໍໃຫ້ອາສາສມັກອ່ານພຣະທັມ ດານີເອນ 5:5-6
2) **ອະທິບາຍ:** ຖ້າຫາກພວກເຮົາທົບທວນວາດພາບເບິ່ງ ພຣະທັມດານີເອນ ແລະສັງເກດເບິ່ງກະສັດທີ່ (ເຂັ້ມແຂງອວດດີ, ຍິ່ງຈອງຫອງ)ເໝືອນກັນກັບກະສັດໃນພຣະທັມດານີເອນ 5:6-9 (ທີ່ມີຄວາມຮູ້ສຶກຕົກໃຈ, ຫົວເຂົ່າກະແທກ )
3) **ຖາມວ່າ.** ແມ່ນຫຍັງທີ່ປ່ຽນແປງກະສັດໂດຍກະທັນຫັນ?
- ຄວາມແຂງແຮງ ແລະກຳລັງຂອງມະນຸດບໍ່ອາດສາມາດມາແຂ່ງຂັນກັບພະລັງອຳນາດຂອງພຣະເຈົ້າໄດ້.
- ໃນທັນໃດນັ້ນກະສັດມີຄວາມເຂົ້າໃຈ ລຸກຂຶ້ນມາຫາຜູ້ທີ່ຕໍ່ສູ້ທີ່ໃຫຍ່ກວ່າລາວ.
4) **ຄຳຖາມ:** (1) ຄົນສ່ວນຫລາຍໃນເມື່ອພົບກັບບັນຫາເຂົາຈະກັບໄປຫາໃຜ? ກະສັດນີ້ໄດ້ກັບໄປຫາສິ່ງໃດ?
(2) ເປັນຫຍັງສິ່ງນັ້ນຊ່ອຍລາວບໍ່ໄດ້?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ( ດານີເອນ 5:5-6)
1. ສິ່ງໃດທີ່ດຶງດູດໃຫ້ພວກເຮົາມີຄວາມສົນໃຈໃນທາງນີ້?
2. ກະສັດຄິດວ່າລາວໄດ້ປອດພັຍຈາກການດູຫມິ່ນພຣະເຈົ້ານັ້ນທ່ານຄິດວ່າຢ່າງໃດ?
3. ພວກເຮົາເຫັນສັງຄົມວັທນະທັມຂອງພວກເຮົາທີ່ເປັນປໍຣະປັກຕໍ່ພຣະເຈົ້າໂດຍທາງ ວາຈາ ຫລືການກະທຳແລ້ວຈະຫລີກລ້ຽງການພິພາກສາໄດ້ຢູ່ບໍ່?

**3. <u>ນ້ຳໜັກແລະພົບຄວາມຕ້ອງການ:</u>** ດານີເອນ 5:22-28, 30-31

1) ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ດານີເອນ 5:22-28, 30-31

2) **ຄຳຖາມ:** (1) ສິ່ງທີ່ເປັນຂອງພຣະເຈົ້າທີ່ຄົນເອົາເຮັດເປັນພຣະເຈົ້າ ແທນພຣະເຈົ້ານັ້ນມີຫຍັງແດ່?

(2). ສິ່ງທີ່ເບັນຊັດຊາເຣເອົາຈາກພຣະວິຫານມາໃຊ້ໃນງານກິນລ້ຽງນັ້ນເປັນຂອງສັກສິດ. ຖາມວ່າ ແມ່ນຫຍັງທີ່ເປັນສິ່ງສັກສິດໃນສມັຍນີ້?

(3) ແມ່ນຫຍັງທີ່ພຣະເຈົ້າໃຫ້ສັກສິດຢູ່ໃນຊີວິດຂອງພວກເຮົາ?

(4) ທ່ານຄິດວ່າພຣະເຈົ້າໄດ້ຊົງເປີດເຜີຍພຣະອົງເອງ ແລະປະທານຕຳແໜ່ງໃຫ້ຜູ້ທີ່ພຍາຍາມບໍ່ໃຫ້ເອົາໃຈໃສ່ພຣະອົງຫລືບໍ່?

(5) ໃນເມື່ອພຣະເຈົ້າຊົງຊັ່ງນ້ຳໜັກຜູ້ໃດຜູ້ນຶ່ງແລ້ວເຂົາຮູ້ສຶກວ່າເຂົາມີຄວາມຕ້ອງການ, ໃນທຸກມື້ນີ້ເປັນແນວໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ດານີເອນ 5:22-28, 30-31

1. ການທີ່ກະສັດເບັນຊັດຊາເຣຮູ້ຈັກຄວາມເສັຽຫານຂອງກະສັດເນບູກາດເນັດຊາ ແລະພຍາຍາມເຮັດດີໃຫ້ພຣະເຈົ້າຍົກເວັ້ນການພິພາກສາຂອງເບັນຊັດຊາເຣນັ້ນທ່ານຄິດວ່າແນວໃດ?
2. ໃນສມັຍນີ້ພວກເຮົາມີປະສົບການກັບຮອຍມືຂຽນໃສ່ຝາບໍ່?
3. ທ່ານບໍ່ແມ່ນກະສັດ, ບໍ່ຮັ່ງມີ ແລະບໍ່ມີອຳນາດໃດ ໆ ແລ້ວບົດຮຽນນີ້ເປັນປໂຍດໃຫ້ແກ່ທ່ານໄດ້ແນວໃດ?
4. ໃນວັທນະທັມຂອງພວກເຮົາສເລີມສລອງຜົນລາຍໄດ້ ແລະພລັງງານແຕ່ບໍ່ໄດ້ຊັ່ງຊາ ຜົນອັນຕະລາຍຈະມີມີຫລາຍປານໃດ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ພຣະເຈົ້າຕ້ອງການໄພ່ພົນຂອງພຣະອົງຫລີກໜີອອກຈາກສິ່ງສັກສິດຊົ່ວຄາວນັ້ນ ແລະຫັນຫລັງໃຫ້ມັນ.
- ພຣະເຈົ້າຮູ້ວ່າທຸກຄົນຈະຕ້ອງການປະເຊີນກັບຄວາມຜິດບາບຂອງເຂົາ
- ພຣະເຈົ້າຈະເປັນຜູ້ພິພາກສາຜູ້ທີ່ຊົ່ວອະທັມ ຜູ້ທີ່ບໍ່ຫັນກັບຈາກທາງຊົ່ວຮ້າຍຂອງເຂົາ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )